ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ

ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນະຖາວອນ

3636 ----

ກະຊວງການເງິນ

ເລກທີ ......./ກງ

ນະຄອນຫຼວງວຽງຈັນ, ວັນທີ 20 OCT 2015

## ແຈ້ງການ

ເຖິງ: ທ່ານ ລັດຖະມົນຕີວ່າການບັນດາກະຊວງ, ຫົວໜ້າອົງການທຽບເທົ່າອ້ອມຂ້າງສູນກາງ, ບັນດາທ່ານ ເຈົ້າແຂວງ, ເຈົ້າຄອງນະຄອນຫລວງວຽງຈັນ

ເລື່ອງ: ການຄຸ້ມຄອງ, ນຳໃຊ້ພາຫະນະຂອງລັດປ້າຍລັດບໍລິຫານ

- ອີງຕາມ ກົດໝາຍຄຸ້ມຄອງຊັບສິນຂອງລັດ(ສະບັບປັບປຸງ) ເລກທີ 14/ສພຊ, ລົງວັນທີ 05/07/2012.
- ອີງຕາມດຳລັດ ຂອງນາຍົກລັດຖະມົນຕີ ສະບັບເລກທີ 80/ນຍ, ລົງວັນທີ 28/02/2007 ວ່າດ້ວຍການຈັດຕັ້ງ ແລະ ການເຄື່ອນໄຫວຂອງກະຊວງການເງິນ.
- ອີງຕາມ ບົດແນະນຳວ່າດ້ວຍການຈັດຕັ້ງປະຕິບັດກົດໝາຍວ່າດ້ວຍຊັບສິນຂອງລັດ ສະບັບເລກທີ 699/ກງ, ລົງວັນທີ 19/03/2015.

ໃນໄລຍະຜ່ານມາການຄຸ້ມຄອງນຳໃຊ້ພາຫະນະຂອງລັດ ກໍ່ເຫັນວ່າອົງການຈັດຕັ້ງຕ່າງໆຂອງລັດກໍ່ໄດ້ມີຄວາມເອົາໃຈໃສ່ໃນການຄຸ້ມຄອງ ແຕ່ເພື່ອເຮັດໃຫ້ການຄຸ້ມຄອງ, ການຂຶ້ນບັນຊີ, ການຈົດທະບຽນພາຫະນະຂອງລັດ ໃຫ້ມີຄວາມເປັນເອກະພາບ ແລະ ຈັດຕັ້ງປະຕິບັດໃຫ້ຖືກຕ້ອງຕາມລະບຽບກົດໝາຍ ກະຊວງການເງິນ ຈຶ່ງແຈ້ງມາຍັງທ່ານ ເພື່ອປະຕິບັດດັ່ງລຸ່ມນີ້:

1. ການຄຸ້ມຄອງນຳໃຊ້ພາຫະນະຂອງລັດຕ້ອງໃຫ້ຖືກຕ້ອງຕາມລະບຽບກົດໝາຍ, ມີຄວາມປະຢັດ, ນຳໃຊ້ເຂົ້າໃນວຽກງານລວມຂອງລັດຢ່າງແທ້ຈິງ. ພາຫະນະຂອງລັດທຸກຊະນິດ ຕ້ອງໄດ້ຜ່ານການກວດກາເອກະສານ,ຈົດທະບຽນ ແລະ ຂຶ້ນບັນຊີຕາມແບບຟອມຂອງຂະແໜງຄຸ້ມຄອງຊັບສິນຂອງລັດກ່ອນ ຈຶ່ງພິຈາລະນາ ແລະ ອອກໃບທະບຽນໃຫ້.
2. ຫ້າມກອງຄຸ້ມຄອງພາຫະນະ ແລະ ການຂັບຂີ່ ບັນດາແຂວງ, ນະຄອນຫລວງວຽງຈັນ ອອກໃບທະບຽນຊົ່ວຄາວໃຫ້ບຸກຄົນ, ການຈັດຕັ້ງຕ່າງໆຕິດປ້າຍທະບຽນລົດລັດບໍລິຫານ ໂດຍບໍ່ໄດ້ຮັບອະນຸຍາດຈາກຂະແໜງຄຸ້ມຄອງຊັບສິນຂອງລັດ.
3. ບໍ່ອະນຸຍາດໃຫ້ບຸກຄົນ, ບໍລິສັດເອກະຊົນ, ນັກທຸລະກິດຕ່າງດ້າວ ໄປຂໍນຳໃຊ້ປ້າຍລັດບໍລິຫານຢ່າງເດັດຂາດ ເນື່ອງຈາກປ້າຍລົດລັດບໍລິຫານ ແມ່ນໃຫ້ນຳໃຊ້ເຂົ້າໃນວຽກລວມຂອງລັດເທົ່ານັ້ນ.
4. ພາຫະນະຂອງລັດທີ່ໄດ້ມີການຕົກລົງຂອງຂັ້ນເທິງ ໃນການສະສາງອອກຈາກບັນຊີຂອງລັດ ແລະ ໄດ້ມີການຊຳລະເງິນເຂົ້າງົບປະມານຕາມລະບຽບຫຼັກການແລ້ວ ຕ້ອງໄດ້ປົດປ້າຍທະບຽນ(ປ້າຍລັດ)ອອກ ແລະ ໃຫ້ປະຕິບັດໃຫ້ຖືກຕ້ອງຕາມລະບຽບກົດໝາຍ.
5. ສຳລັບຄ່າຈົດທະບຽນສັນຍາຊື້-ຂາຍພາຫະນະ ຂະແໜງຄຸ້ມຄອງຊັບສິນຂອງລັດຕ້ອງປະຕິບັດຕາມລັດຖະບັນຍັດຂອງປະທານປະເທດ ສະບັບເລກທີ 03/ປປທ, ລົງວັນທີ 26 /12/2012 ຢ່າງເຂັ້ມງວດ. ພາຫະນະຢູ່ແຂວງໃດແມ່ນໃຫ້ຈົດທະບຽນຢູ່ແຂວງນັ້ນ, ຫ້າມຫ້ອງການຄຸ້ມຄອງຊັບສິນຂອງລັດຈົດທະບຽນສັນຍາຊື້-ຂາຍພາຫະນະຫຼືການມອບໂອນຂອງແຂວງອື່ນໆ ທີ່ບໍ່ຢູ່ໃນຄວາມຮັບຜິດຊອບຂອງຕົນ. ພາຫະນະທີ່ຂຶ້ນກັບບັນດາກະຊວງ, ອົງການອ້ອມຂ້າງສູນກາງ ແລະ ພາຫະນະທີ່ນຳໃຊ້ທຶນກູ້ຢືມ ແລະ ຊ່ວຍເຫຼືອລ້າແມ່ນໃຫ້ຈົດທະບຽນ, ຂຶ້ນບັນຊີຢູ່ກົມຄຸ້ມຄອງຊັບສິນຂອງລັດ ກະຊວງການເງິນ.
6. ກໍລະນີບຸກຄົນ, ການຈັດຕັ້ງທີ່ມີການລະເມີດ ແມ່ນຈະໄດ້ປັບໃໝຕາມລະບຽບກົດໝາຍ.

ດັ່ງນັ້ນ, ຈຶ່ງແຈ້ງມາຍັງທ່ານ ເພື່ອຈັດຕັ້ງປະຕິບັດຕາມທາງຄວນດ້ວຍ.

ລັດຖະມົນຕີວ່າການກະຊວງການເງິນ

ກະຊວງການເງິນ

ລັດຖະມົນຕີ

ດຣ ລຽນ ທີແກ້ວ

ບ່ອນສົ່ງ:
-ບັນດາກະຊວງ, ອົງການອ້ອມຂ້າງສູນກາງ ບ່ອນລະ 01 ສະບັບ
-ບັນດາແຂວງ, ນະຄອນຫລວງ ບ່ອນລະ 01 ສະບັບ
-ພະແນກການເງິນແຂວງ, ນະຄອນຫລວງ ບ່ອນລະ 01 ສະບັບ
-ກອງຄຸ້ມຄອງພາຫະນະ ແລະ ການຂັບຂີ່ 01 ສະບັບ ເພື່ອປະຕິບັດ
-ກອງຄຸ້ມຄອງແລະຜະລິດປ້າຍ 01 ສະບັບ ເພື່ອປະຕິບັດ
-ສຳເນົາໄວ້ 01 ສະບັບ